# ໂຄງການບໍລິການທາງການແພດໃຫ້ແກ່ຜູ້ທຸກຍາກ (MISP)

## ການຈ່າຍຊ່ວຍ

### ການຈ່າຍຊ່ວຍແມ່ນຫຍັງ?

ການຈ່າຍຊ່ວຍ (SOC) ແມ່ນຈຳນວນເງິນປະຈຳເດືອນທີ່ທ່ານຕ້ອງຈ່າຍໄປເປັນຄ່າໃຊ້ຈ່າຍດູແລສຸຂະພາບຂອງທ່ານກ່ອນທີ່ MISP ຈະຈ່າຍຄ່າໃຊ້ຈ່າຍຂອງທ່ານ, ຂຶ້ນຢູ່ກັບລາຍໄດ້ ແລະຊັບສິນຂອງທ່ານ. SOC ເຮັດວຽກຄືກັບຄ່າໃຊ້ຈ່າຍສ່ວນທຳອິດປະຈຳເດືອນຂອງແຜນປະກັນໄພເອກະຊົນ.

ທ່ານຈ່າຍຄ່າ SOC ຂອງທ່ານໃຫ້ກັບຜູ້ໃຫ້ບໍລິການ MISP. ເງິນອື່ນໆທີ່ທ່ານຈ່າຍໃຫ້ກັບການບໍລິການທາງການແພດທີ່ MISP ບໍ່ຮັບຜິດຊອບໃນລະຫວ່າງເດືອນ, ລວມທັງຜະລິດຕະພັນທີ່ຊື້ເອງ, ແມ່ນຈະບໍ່ນັບໄປເປັນ MISP SOC ຂອງທ່ານ.



### ທ່ານໄດ້ຮັບການບໍລິການທາງການແພດແລ້ວບໍ ຫຼືບໍ່ສາມາດຈ່າຍໄດ້?

ຖ້າມີການບໍລິການໃຫ້ຢູ່ທີ່ສູນການແພດຊຸມຊົນ (CMC) ພາຍໃນ 30 ວັນຜ່ານມາ, ທ່ານອາດຈະຂໍສະໝັກເອົາ MISP ທີ່ມີຜົນຍ້ອນຫຼັງໄດ້. ຖ້າທ່ານໄດ້ຮັບອະນຸມັດໃຫ້ໄດ້ MISP ມີຜົນຍ້ອນຫຼັງກັບ SOC, ທ່ານຮັບຜິດຊອບຈ່າຍຄ່າ SOC ໃຫ້ກັບຜູ້ໃຫ້ບໍລິການແຕ່ລະເດືອນທີ່ທ່ານໄດ້ຮັບການຢັ້ງຢືນ MISP **<u>ແລະ</u>**ສະນັ້ນ ທ່ານໄດ້ຮັບການບໍລິການທີ່ MISP ຄຸ້ມຄອງໃຫ້ຢູ່ໃນນັ້ນ.

**ການບໍລິການຈະຕ້ອງມາຈາກ:**

- ໂຮງໝໍສູນການແພດຊຸມຊົນ (CMC) ຫຼືຫ້ອງສຸກເສີນ, ຫຼືຄລີນິກຄົນເຈັບພາຍນອກ
- ທ່ານໝໍກຸ່ມການແພດຄະນະຄາລິຟໍເນຍກາງ (CCFMG) ທີ່ໃຫ້ບໍລິການຢູ່ທີ່ຄລີນິກ CMC ຫຼືຢູ່ໃນຫ້ອງສຸກເສີນ CMC

**ເມື່ອທ່ານສະໝັກຂໍ MISP ທີ່ມີຜົນຍ້ອນຫຼັງ, ທ່ານຈະຕ້ອງໄດ້ນຳເອົາເອກະສານຕໍ່ໄປນີ້ເພີ່ມເຕີມໃສ່ເອກະສານອື່ນ ທີ່ຈະຕ້ອງການອີກ ໄປໃຫ້ກັບຫ້ອງການໜ່ວຍງານ MISP:**

- ໃບຮັບເຂົ້າໂຮງໝໍ
- ໃບບິນການບໍລິການທາງການແພດ

**MISP Unit Office**

1221 Fulton Street
Fresno CA 93721

***ທ່ານມີຄຳຖາມບໍ?***

ໂທຫາຫ້ອງການໜ່ວຍງານ MISP ທີ່ເບີ (559) 600-6580 ຫຼືເຈົ້າໜ້າທີ່ MISP ທີ່ເບີ (559) 600-7069

### ການຈ່າຍຊ່ວຍຂອງທ່ານຖືກກຳນົດແນວໃດ

ການຈ່າຍຊ່ວຍຂອງທ່ານຖືກກຳນົດ ເມື່ອທ່ານສະໝັກຂໍ MISP.

**ພະນັກງານ MISP ຈະແຈ້ງການເປັນລາຍລັກອັກສອນໃຫ້ທ່ານທີ່ບອກກັບທ່ານ ຖ້າ**

- ທ່ານບໍ່ຜ່ານເງື່ອນໄຂໄດ້ຮັບ MISP;
- ທ່ານຜ່ານເງື່ອນໄຂໄດ້ຮັບ MISP ໂດຍບໍ່ຕ້ອງມີການຈ່າຍຊ່ວຍ; ຫຼື
- ທ່ານຜ່ານເງື່ອນໄຂໄດ້ຮັບ MISP ໂດຍຕ້ອງມີການຈ່າຍຊ່ວຍ ແລະຈຳນວນການຈ່າຍຊ່ວຍຂອງທ່ານ.

ຈຳນວນເງິນ SOC ຂອງທ່ານຖືກກຳນົດໂດຍລາຍໄດ້ຂອງທ່ານວ່າ ຕ່ຳກວ່າ ຫຼືສູງກວ່າຂີດຈຳກັດລາຍໄດ້ທີ່ອະນຸຍາດໄດ້ສຳລັບຂະໜາດຄົວເຮືອນຂອງທ່ານຫຼືບໍ່. ຖ້າລາຍໄດ້ຂອງທ່ານຕ່ຳກວ່າຂີດຈຳກັດທີ່ອະນຸຍາດໄດ້, ທ່ານຈະບໍ່ມີການຈ່າຍຊ່ວຍ. ຖ້າລາຍໄດ້ຂອງທ່ານເກີນຂີດຈຳກັດທີ່ອະນຸຍາດໄດ້ສຳລັບທີ່ບໍ່ແມ່ນ SOC, ແຕ່ຕ່ຳກວ່າລາຍໄດ້ສູງສຸດທີ່ອະນຸຍາດໃຫ້, ທ່ານຈະມີ SOC. ຖ້າລາຍໄດ້ຂອງທ່ານເກີນຂີດຈຳກັດທີ່ອະນຸຍາດໄດ້ ຫຼືທ່ານມີ SOC, ທ່ານອາດຈະເຂົ້າສູ່ MISP ຫຼືຫຼຸດ SOC ຂອງທ່ານລົງ ຖ້າທ່ານເຮັດການຊຳລະຕົວຈິງທີ່ໄດ້ຮັບອະນຸຍາດພາຍໃຕ້ການສະຫຼະສິດຄວາມລຳບາກທາງດ້ານເງິນຂອງ MISP.

Department of Public Health
www.fcdph.org